English | ລາວ

# U.S. Embassy
# Vientiane, Laos

Please follow the steps below *before* your immigrant visa interview at the U.S. Embassy in Vientiane, Laos.

Important points:

- Failure to bring in necessary documentation may result in your visa being refused.
- Bring original and copies of all civil documents. Your visa will be refused if you don't bring the original and you need to provide a copy to get the original document back.
- Do your medical exam early. It takes about two weeks to get the results back. If you don't have you medical exam at the time of interview your visa will be refused.
- We **do not** require translations of documents in Lao language. After you receive an interview appointment letter from NVC, you must take the following steps **before** your immigrant visa interview date at the U.S. Embassy in Vientiane, Laos.

## Step 1: Get a medical exam in Vientiane

As soon as you receive your appointment date, you must schedule a medical exam at Alliance International Medical Centre in Vientiane. Click the "Medical Exam Instructions" for more information. It takes two weeks or more to get the results of your medical exam. If you don't have the results at your interview your visa will be refused.

**Medical Exam Instructions**

## Step 2: Complete your pre-interview checklist

Bring all required original documents to your interview. Please print the checklist below and bring it to your interview along with the listed documents.

**Pre-Interview Checklist**

## Step 3: Review interview guidelines

Read our interview guidelines to learn about any special actions that you need to take *before* your visa interview.

**Interview Guidelines**

## Contact information


U.S. Embassy
Ban Somvang Thai
Thadeua Road, Km 9
Hatsayfong District
Vientiane, Laos

Email: conslao@state.gov

Website: la.usembassy.gov

Cancel and Reschedule: conslao@state.gov


Map:




## Additional Links

- Diversity visa instructions
- After your interview
- Frequently asked questions
- Where to find civil documents

## Interview Preparation Video



# Medical Exam Instructions

All immigrant visa applicants, regardless of age, require a medical examination prior to the issuance of a visa. Only a physician accredited by the U.S. Embassy can perform this exam. **It is your responsibility to schedule a medical exam with Alliance International Medical Centre before your visa interview** at the U.S. Embassy. Medical examination results from other physicians will not be accepted. Most medical exam results will be returned to the applicants within 14 days. However, medical result availability depends on the applicant's medical history and may take longer.

**As soon as you receive your appointment date, schedule a medical exam at Alliance International Medical Centre in Vientiane. If you don't have the results at your interview your visa will be refused.**

Approved physicians

**Alliance International Medical Centre**
Souphanouvong Road, Wattayyaithong Village,
Sikhottabong District, Vientiane Capital
Tel: 856-21-513095
Email: info@aimclao.com

## Items to bring to your medical examination

The doctor will need the following items to complete the medical exam forms:

- Your visa interview letter from NVC.
- Your passport,
- Four (4) recently taken passport-sized color photographs,
- A copy of your immunization records, if available, and
- DS-260 confirmation page

Any medical examination fees, including x-ray and blood test fees, must be paid directly to the examining physician. Vaccinations start from approximately LAK 223,000 to 3,718,000 ($27 - 440 USD) depending on age for applicants over 15 years of age, but increase based on age and medical history.

## During the medical exam

The medical examination will include a medical history review, physical examination, chest X-ray, gonorrhea test, and a blood tests (for applicants 15 years of age or older). The United States also requires tuberculosis (TB) testing for all applicants two years of age or older. Please be prepared to discuss your medical history, medications you are taking, and current treatments you are undergoing. More information on general medical requirements for U.S. immigrants is available here.

U.S. immigration law requires immigrant visa applicants to obtain certain vaccinations prior to the issuance of a visa. Current immigrant visa vaccination requirements are available here. You can also read Frequently Asked Questions about our medical examination requirements online.

## After the medical exam

In most cases, the doctor will provide you with exam results in a sealed envelope. **DO NOT OPEN THIS ENVELOPE**. Instead, bring it to your visa interview.

↓ Continued on next page ↓

Return to top

# Medical Exam Instructions

Any x-rays taken will be given to you. You **DO NOT** need to bring the x-rays to your visa interview unless you suffer from tuberculosis (TB). However, you **must** carry the x-rays with you when you travel to the United States for the first time. The medical report must be less than six months old when you enter the United States as an immigrant.

Return to top

# Pre-Interview Checklist

**Please use the list below to determine the items that every applicant must bring to the immigrant visa interview.**

**Any documents that are not in either English or Lao must be accompanied by a certified English translation:**

- ☐ A copy of your NVC interview letter (does not apply to Diversity Visa, fiancé(e), adoptive, or asylee/refugee applicants).
- ☐ Unexpired passport valid for six months beyond your intended date of entry to the United States and photocopy of the biographic page (where your name and photo are located).
- ☐ Two (2) recent color passport-size photographs of each person applying for a visa (5 cm x 5 cm, or 2 inch x 2 inch). Please review our online photo requirements **Photos older than six months will not be accepted.**
- ☐ Confirmation page from the Form DS-260 Application for an Immigrant Visa you submitted online at ceac.state.gov/iv.
- ☐ Your Original Household Registration Book (Family book) with a photocopy of all pages. **Do not** create a new Household Registration Book only for the visa interview. If you have a new Household registration book bring in the previous cancelled book or a photocopy of it. **You must bring your original Household Registration Book.**
- ☐ Your **original** birth certificate **and a photocopy**. For IR5 (parents) and F4 (Sibling) cases, you must also provide the original birth certificate of the petitioner in addition to your original birth certificate. Failure to bring an original document will result in your visa being denied. Original documents are not usually contained in your file from the United States—always hands carry them with you to your interview. Note that all Lao birth certificates issued after 2008 must be issued by the district office. Village birth records are not acceptable.
- ☐ Medical examination results in a sealed envelope (*if the physician gives you these results).* **You must schedule your medical examination at least three (3) weeks before your interview. If you do not have your medical examination results by the time of your interview, your application may be denied.**
- ☐ Evidence of name change if applicable for you.
- ☐ For IR5 and F4 case you must also provide proof of name change if applicable for the petitioner.
- ☐ Original birth certificates for **all children and the spouse of the principal applicant** (*even if he or she will not accompany*) and a photocopy of each original.
- ☐ Valid police record from every country you have lived in for more than 6 months after the age of 16 years old**.**
- ☐ Identification card (ID)

↓ Continued on next page ↓

Return to top

# Pre-Interview Checklist

**Applicants should bring original documents, and their photocopies, to the interview**. The Consular Section needs to see all original documents even if the petitioner submitted original documents to USCIS in the United States. If you bring copies of your original documents we will return the original documents after the interview. We will not return the original documents if you do not have photocopies. We do not require translation for any documents written in Lao.

**Applicants who fall into any category listed in italics below should bring these additional documents:**

*For family-based visa applications*:

- ☐ The appropriate **Form I-864 Affidavit of Support** for **each** financial sponsor along with a photocopy of the sponsor's IRS transcript, or most recent U.S. federal income tax return and any relevant W-2s, if the transcript is unavailable. If you want to combine your personal income with the income of your spouse or other household member you need to submit a form I-864A for each household member along with proof of their legal status in the United States (copy of naturalization certificate, LPR Card, U.S. passport, or Birth Certificate.
    - Form I-864 is necessary to establish the petitioner's capacity to be financially responsible for a beneficiary. Your petition may be denied based on a petitioner's limited financial capacity or if you submit the wrong financial forms. To learn more about the income requirements please visit this **site**.
    - If you determine that the petitioner of an immigrant visa application does not have enough income to sponsor an immigrant beneficiary, please review this **site**. A petitioner may ask a "Joint Sponsor" to financially support an immigrant petition in order to meet income requirements. Joint Sponsors who do not live in the same household as the petitioner must submit a separate I-864 form.
    - A Joint Sponsor may be a member of the petitioner's household. In this case, the Joint Sponsor may submit a form I-864A and include proof of their legal status in the United States (copy of naturalization certificate, LPR Card, U.S. passport, or Birth Certificate).
    - All Joint Sponsors will need to provide copies of their IRS transcript and proof of legal status in the United States (such as a copy of their U.S. passport, Legal Permanent Resident card, or Naturalization Certificate).
- ☐ Evidence of the relationship between the petitioner and visa applicant (such as old photographs or anything that helps to show that you have the relationship to your petitioner that you are claiming).
- ☐ *If you are married*: Your **original** marriage certificate, and a photocopy.
- ☐ *If you were previously married:* Your **original** divorce or spouse's death certificate, and a photocopy.
- ☐ *For IR1 and cases you need to bring original proof termination of prior marriages for the petitioner.*
- ☐ *If you are older than 16 years of age:* The **original** police certificate from your country of current residence and countries of previous residence. If these three items are **all** true, you must bring a more recent police certificate to the interview:

1. You are older than 16 years;
2. You obtained a police certificate more than one year ago; and
3. You still live in the country that issued the police certificate.

↓ Continued on next page ↓

Return to top

# Pre-Interview Checklist

- ☐ *For employment-based visa applications:* Letter from your U.S. employer dated less than one month ago.
- ☐ *If you have ever been convicted of a crime*: Court and criminal records, and a photocopy.
- ☐ *If you have served in any country's military*: Military records, and a photocopy ( Not available in Laos)
- ☐ *If you are adopted:* Adoption papers or custody documents, and a photocopy.
- ☐ *If you are the petitioner's stepchild:* The **original** marriage certificate of the petitioner and your biological parent, and a photocopy along with divorce records for any previous marriages of either parent.

If the biological parent married to the petitioner has legal status in the U.S. you should include a photocopy of the proof of their status (Legal Permanent Resident card, Naturalization Certificate, work authorization, etc.).

Return to top

# Interview Guidelines

## Rescheduling or cancelling your interview

**There may be a significant wait before the next available appointment,** so please attempt to attend the date already assigned. For some family-based and employment preference visa categories, a visa may become available within the month you have been scheduled for an interview. DV applicants should be aware that visas are numerically limited and must be issued by September 30 of the program year. **There is no guarantee that a visa will still be available on the date of your rescheduled interview.** Please carefully consult the Visa Bulletin before you decide to reschedule your interview.

If you are unable to attend your appointment, please contact the Consular Section by email at CONSLAO@state.gov as soon as possible.

## Security screening procedures

All visitors to the U.S. Embassy in Vientiane must follow certain security procedures. Any visitor who declines to be screened by U.S. Embassy security personnel will be unable to enter the embassy. You are not allowed to enter the U.S. Embassy while carrying any battery-operated electronic device, large bags or luggage, or food and liquid items. To avoid delaying your entry and that of those in line behind you, please bring only what is required for your interview.

## Accompanying persons

The following persons may accompany a visa applicant to their interview:

- Interpreter: Applicants may bring **ONE** interpreter if they do not speak English, Lao, or Hmong well enough to participate in an interview.
- Special Needs Visitors: Applicants may bring ONE person to help if they are elderly, disabled, or a minor child.
- The petitioner is welcome to attend the interview.
- Attorneys are not permitted to accompany clients into the waiting room or to their interview.

## Immigrant visa fees

If you have not paid all required fees to the National Visa Center, please be prepared to pay these fees on the day of your interview. All fees may be paid in either U.S. dollars or the Lao Kip equivalent. We accept cash only. *Please note that if you are found ineligible to receive a visa, the application fee cannot be refunded*. A complete list of fees can be found here.

## Do not make travel plans outside of Laos

If your visa is approved, we will keep your passport at the embassy while we prepare your immigration packet and print a visa for your passport. At the time of visa approval we will let you know when the visa will be ready for pick-up and issue you a paper receipt. If you have to travel within Laos while your passport is still with us, please make sure you have a valid picture ID other than your passport.

Return to top

# After Your Visa Interview

A consular officer can make a decision on a visa application only after reviewing the formal application and interviewing the applicant. ***There is no guarantee that you will receive a visa.*** Do not sell your house, car or property, resign from your job or make non-refundable flight or other travel arrangements until you have received your immigrant visa.

## If more information is needed

Sometimes a consular officer is unable to make a decision on a visa application because he/she needs to review additional documents or the case requires further administrative processing. *When additional documents are requested,* the consular officer will give you a refusal letter that asks you to submit additional documents. The letter will include instructions on when to bring those documents to the embassy. *Administrative processing* takes additional time after the interview. Most administrative processing is resolved within 60 days. However, the timing varies based on the circumstances of each case. Before inquiring about the status of administrative processing, please wait **at least** 60 days after your interview.

## What happens after visa approval

**Passport, Visa, and Sealed Immigrant Packet** – We will place your immigrant visa on a page in your passport. Please review your visa to make sure there are no spelling errors. We will also give you a sealed envelope containing documents that you must give to U.S. immigration authorities when you arrive in the United States for the first time. ***Do not open this envelope. You must carry it with you; do not put it in your checked luggage.*** If you receive X-rays during your medical examination, carry those with you and give them to the U.S. immigration authorities.

**USCIS Immigrant Fee** – All individuals who are issued immigrant visas overseas must **pay an Immigrant Fee** to U.S. Citizenship and Immigration Services (USCIS) ***prior to traveling*** to the United States. This fee is for processing your residency status and printing your Permanent Resident Card. The only people exempt from paying this fee are: children entering the United States under the Hague Process, returning residents, and people traveling on a K visa.

**When You Should Travel** – You must enter the United States *before* the expiration date on your visa, which is usually six (6) months from the date of printing. Your visa cannot be extended and all fees are nonrefundable. The principal applicant must enter **before or at the same time** as other family members with visas. Unless they are eligible for benefits under the Child Status Protection Act, children who are issued a visa before turning 21 years of age must enter the United States ***before*** their 21st birthday to avoid losing their immigrant status.

**Getting a Green Card** – Your Form I-551 Permanent Resident Card, also known as a green card, will be automatically mailed to the address in the United States that you write in your visa application form. This is a very important document that proves you have permission to reside in the United States. *If you plan to travel outside the U.S.* ***before*** *your green card arrives*: Please consult USCIS's and CBP's websites for rules about what documents you need to re-enter the country. We also recommend you check with the airline to ensure you are in compliance with their rules. *Once your card is issued, you should not stay outside of the United States for more than one year. If you do, you will lose your status as a Lawful Permanent Resident.*

**Children's Issues** – In the United States, children are required to have certain vaccinations before they can enroll in school. We recommend that you bring your child's complete vaccination records with you to the United States. If your child is adopted, you have full custody as a result of a divorce, or you share custody with another parent, you should bring a copy of all applicable adoption or custodial papers from the authoritative court in your home country. You will need these papers (translated into English) for issues such as school enrollment, medical care, and eventual citizenship.

**Information for New Immigrants** – Please visit the USCIS web page for helpful information on moving to the Unites States. You can read their publication "Welcome to the United States: A Guide for New Immigrants" online.

Return to top

# Diversity Visa Applicants – Additional Information

If you are interviewing for a **Diversity Visa (DV)**, all of the above instructions apply to you. Please schedule and attend a medical examination prior to your visa interview; enroll in the required courier service; and gather the required documents.

*Below are additional instructions that apply **only** to DV applicants.*

## Bring to your interview

In addition to the documents listed on the Pre-Interview Checklist in this package, DV applicants should also bring the following items to your visa interview:

- ☐ Appointment information printed from the "Entrant Status Check" on the E-DV website
- ☐ Documents showing that you have either a qualifying high school education **OR** have two years of qualifying work experience in the last five years immediately prior to application (for the principal applicant only; more information is available online).
- ☐ Payment in cash of the $330 Diversity Visa Application Fee

## Review your DV Lottery entry

Prior to your visa interview, we recommend that you review the data on your initial E-DV entry. On your initial E-DV application, you must have correctly entered your marital status. If you are legally married you must have listed your spouse, even if you are currently separated from him/her (unless your spouse is a U.S. citizen or Lawful Permanent Resident).

Additionally, you must have listed ALL of your living children who are unmarried and under 21 years old. This includes your natural children, your spouse's children, or children you have formally adopted in accordance with the laws of your country.

***Failure to have listed an existing spouse or children at the time of your entry in the Diversity Visa lottery will result in the denial of your visa and visas for your family.*** Any fees paid to the U.S. government in support of your visa application(s) are nonrefundable. If you failed to include a child who had already been born, or a spouse to whom you were married when you entered the lottery, you should not proceed with the visa application. You can review the eligibility requirements online.

Return to top

English | ລາວ

# ສະຖານທູດສະຫະລັດອາເມລິກາ ປະຈຳນະຄອນຫຼວງວຽງຈັນ, ລາວ

ກະລຸນາປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້ ກ່ອນທີ່ທ່ານຈະສຳພາດວີຊາຖາວອນທີ່ສະຖານທູດອາເມລິກາປະຈຳນະຄອນຫລວງວຽງຈັນ, ສປປ ລາວ.

## ຂັ້ນຕອນທີ1: ການກວດສຸຂະພາບທີ່ນະຫລວງວຽງຈັນ

ທັນທີທີ່ທ່ານໄດ້ຮັບມື້ນັດສຳພາດ

ທ່ານຈະຕ້ອງນັດກວດສຸຂະພາບທີ່ໂຮງໝໍສູນການແພດ ອະໄລແອນສ

ທີ່ນະຄອນຫລວງວຽງຈັນ.

ລາຍລະອຽດອ່ານຄຳແນະນຳເພີ້ມເຕີມກ່ຽວກັບການກວດສຸຂະພາບ.

ເພາະຈະໃຊ້ເວລາ 2 ອາທິດເພື່ອທີ່ຈະໄດ້ຮັບຜົນກວດສຸຂະພາບ.

ຖ້າທ່ານບໍ່ມີຜົນກວດສຸຂະພາບເວລາມາສຳພາດ ວີຊາຂອງທ່ານອາດຖືກປະຕິເສດ.

ຄຳແນະນຳການກວດສຂະພ

## ຂັ້ນຕອນທີ2: ກວດເບິ່ງລາຍການເອກະສານກ່ອນທີ່ທ່ານຈະມາສຳພາດ

ໃຫ້ເອົາເອກະສານທັງໝົດ ທີ່ເປັນຕົ້ນສະບັບມາກັບທ່ານເວລາມາສຳພາດ.

ກະລຸນາພິມເອົາລາຍການເອກະສານດັ່ງລຸ່ມນີ້ ແລະ

ຖືມາພ້ອມກັບເອກະສານທີ່ຕ້ອງການເວລາມາສຳພາດ.

ລາຍການກວດສອບກ່ອນການ

## ຂັ້ນຕອນທີ3: ທວນຄືນຄຳແນະນຳໃນການສຳພາດ

ອ່ານຂໍ້ມູນແນະນຳການສຳພາດຂອງພວກເຮົາໃຫ້ເຂົ້າໃຈ

ເພື່ອກະກຽມເອກະສານທີ່ທ່ານຕ້ອງເຮັດກ່ອນເຂົ້າມາສຳພາດ.

ຄຳແນະນຳສຳຫບເຂົ້າສຳພາດ

## Contact information


U.S. Embassy
Ban Somvang Thai
Thadeua Road, Km 9
Hatsayfong District
Vientiane, Laos

ອີເມວ
conslao@state.gov

ເວບໄຊ້
la.usembassy.gov

ຍົກເລີກ ແລະ ເຮັດນັດໃໝ່
conslao@state.gov


ແຜນທີ່




## ລີ້ງເພີ່ມເຕີມ

- ຄຳແນະນຳສຳລັບວີຊ່າລ໋ອດຕາລີ້
- ຫຼັງຈາກການສຳພາດ
- ຄຳຖາມທີ່ມັກຖືກຖາມເປັນປະຈຳ
- ບ່ອນໄປເຮັດເອກະສານຂອງພົນລະເຮືອນ

## ວີດີໂອການກະກຽມການສຳພາດ



# ຄຳແນະນຳການກວດສຸຂະພາບ

ຜູ້ສະໝັກທຸກຄົນບໍ່ຈຳກັດອາຍຸຕ້ອງໄດ້ກວດສຸຂະພາບກ່ອນທີ່ຈະອອກວີຊາ.
ມີໂຮງໝໍແຫ່ງດຽວເທົ່ານັ້ນທີ່ຖືກຮັບຮອງຈາກສະຖານທູດສະຫະລັດອາເມລິກາໃຫ້ເປັນບ່ອນກວດສຸຂະພາບໃຫ້ທ່ານ. ເປັນຄວາມຮັບຜິດຊອບຂອງຜູ້ສະໝັກທີ່ຈະຕ້ອງນັດກວດສຸຂະພາບກັບໂຮງໝໍສູນການແພດ ອະໄລແອນສ ກ່ອນທີ່ທ່ານຈະມາສຳພາດທີ່ສະຖານທູດອາເມລິກາ. ຜົນກວດສຸຂະພາບຈາກໂຮງໝໍບ່ອນອື່ນແມ່ນຈະບໍ່ຮັບ. ຜົນກວດສຸຂະພາບສ່ວນໃຫ່ຍຈະສົ່ງຄືນໃຫ້ຜູ້ສະໝັກພາຍໃນ14 ມື້;
ແຕ່ຂື້ນກັບປະຫັວດການກວດສຸຂະພາບຂອງແຕ່ລະຄົນ ບາງຄົນອາດຈະໃຊ້ເວລາດົນ.
ທັນທີທີ່ທ່ານໄດ້ຮັບມື້ນັດສຳພາດ ທ່ານຈະຕ້ອງນັດກວດສຸຂະພາບທີ່ໂຮງໝໍສູນການແພດ ອະໄລແອນສ ທີ່ນະຄອນຫລວງວຽງຈັນ. ຖ້າທ່ານບໍ່ມີຜົນກວດສຸຂະພາບເວລາມາສຳພາດ ວີຊາຂອງທ່ານອາດຖືກປະຕິເສດ.

**ໂຮງໝໍທີ່ຖືກອະນຸມັດໃຫ້ໄປກວດສຸຂະພາບ**
ສູນການແພດອະໄລແອນສ
ຖະໜົນ ສຸພານຸວົງ, ວັດໄຕໃຫ່ຍທົ່ງ
ສີໂຄດຕະບອງ,ນະຄອນຫລວງວຽງຈັນ
ໂທ:856-21-513095
ອີເມວ:info@aimclao.com

## ເອກະສານທີ່ທ່ານຄວນເອົາໄປນຳເວລາໄປກວດສຸຂະພາບ.

ທ່ານໝໍຕ້ອງການເອກະສານດັ່ງນີ້ເພື່ອປະກອບແບບຟອມການກວດສຸຂະພາບ

- ໜັງສືມື້ນັດສຳພາດຈາກສູນກາງວີຊາ
- ໜັງສືຜ່ານແດນ
- ຮູບ4 ແຜ່ນ ຮູບຖ່າຍປະຈຸບັນ
- ສຳເນົາການສັກວັກຊີນ. ຖ້າມີ
- ໜັງສືຢືນຢັນຂອງແບບຟອມສະໝັກ DS-260

ຄ່າທຳນຽມການກວດສຸຂະພາບ, ລວມຄ່າສ່ອງລັງສີ ແລະ ຄ່າກວດເລືອດແມ່ນຕ້ອງຈ່າຍຢູ່ໂຮງໝໍໂດຍກົງ. ຄ່າສັກວັກຊີນເລີ່ມຕົ້ນສະເລ່ຍ 223,000ກີບ ຫາ 3,718,000ກີບ ($27- 440 USD) ຂື້ນກັບອາຍຸ ແລະ ປະຫັວດທາງສຸຂະພາບຂອງຜູ້ສະໝັກທີ່ມີອາຍຸ15ປີຂື້ນໄປ, ແຕ່ວ່າອາດເພີ້ມຕາມອາຍຸ ແລະ ປະຫວັດສຸຂະພາບຂອງຜູ້ສະຫມັກ.

ກັບຄືນໄປເບິ່ງດ້ານເທິງ

# ຄຳແນະນຳການກວດສຸຂະພາບ

## ໃນໄລຍະທີ່ກວດສຸຂະພາບ

ການກວດສຸຂະພາບແມ່ນລວມທັງການກວດປະຫວັດສຸຂະພາບ, ກວດສຸຂະພາບທົ່ວໄປ,ສ່ອງລັງສີ, ກວດພະຍາດຕິດຕໍ່ທາງເພດສໍາພັນ ແລະ ກວດເລືອດ (ສະເພາະຜູ້ສະໝັກທີ່ອາຍຸ15ຂຶ້ນໄປ). ທາງສະຫະລັດອາເມລິກາຍັງຕ້ອງການໃຫ້ຜູ້ສະໝັກທຸກຄົນທີ່ມີອາຍຸ2ປີຂຶ້ນໄປກວດພະຍາດວັນນະໂລກ. ກະລຸນາກຽມຂໍ້ມູນ ແລະ ປຶກສາກັບທ່ານໝໍກ່ຽວກັບປະຫວັດສຸຂະພາບຂອງທ່ານ, ຢາທີ່ທ່ານກໍາລັງກິນ ແລະ ທ່ານກໍາລັງປິ່ນປົວຢູ່.
ຂໍ້ມູນເພີ່ມເຕີມກ່ຽວກັບຄວາມຕ້ອງການທົ່ວໄປໃນການກວດສຸຂະພາບສໍາລັບຄົນທີ່ອົບພະຍົກເຂົ້າໄປຢູ່ອາເມລິກາຖາວອນແມ່ນມີໄວ້ຢູ່ນີ້.

ກົດໝາຍກວດຄົນເຂົ້າເມືອງຂອງສະຫະລັດອາເມລິກາໃຫ້ທຸກຄົນທີ່ຈະໄປຢູ່ສະຫະລັດຕ້ອງໄດ້ຮັບການສັກວັກຊີນກ່ອນທີ່ຈະອອກວີຊາ. ການສັກວັກຊີນປະຈຸບັນສໍາລັບວີຊາຖາວອນແມ່ນມີໄວ້ທີ່ນີ້.
ທ່ານສາມາດອ່ານຄໍາຖາມທີ່ພົບເລື້ອຍໆກ່ຽວກັບການກວດສຸຂະພາບມີໄວ້ອອນໄລ໌.

## ຫລັງຈາກກວດສຸຂະພາບແລ້ວ

ໂດຍປົກກະຕິແລ້ວທ່ານໝໍຈະເປັນຜູ້ເອົາຜົນກວດໃສ່ຊອງ ແລະ ຕິດພະນຶກຊອງ ແລະ ຊອງນັ້ນຫ້າມເປີດເດັດຂາດ, ໃຫ້ນໍາຜົນກວດນັ້ນໄປສໍາພາດ.

ທ່ານໝໍຈະເອົາຟິມສ່ອງລັງສີໃຫ້ທ່ານ. ທ່ານບໍ່ຈໍາເປັນຕ້ອງເອົາຟິມສ່ອງລັງສີນັ້ນມານໍາເວລາສໍາພາດ ເວັ້ນເສຍແຕ່ ທ່ານເປັນພະຍາດວັນນະໂລກ.
ແຕ່ທ່ານຕ້ອງເອົາຜົນກວດນັ້ນໄປນໍາເວລາເດີນທາງເຂົ້າສະຫະລັດອາເມລິກາ.
ຜົນກວດສຸຂະພາບຕ້ອງມີອາຍຸໜ້ອຍກ່ວາ 6 ເດືອນເວລາເຂົ້າສະຫະລັດອາເມລິກາ.

ກັບຄືນໄປເບິ່ງດ້ານເທິງ

# ລາຍການກວດສອບກ່ອນການ

ກະລຸນາເບິ່ງລາຍການລຸ່ມນີ້ເພື່ອຮູ້ວ່າຜູ້ສະໝັກແຕ່ລະຄົນຄວນຖືເອກະສານໃດມາໃນມື້ສຳພາດວີຊາຖາວອນ. ເອກະສານໃດທີ່ບໍ່ແມ່ນພາສາລາວ ຫຼື ພາສາອັງກິດ ຕ້ອງແປເປັນພາສາອັງກິດໃຫ້ໝົດພ້ອມຢັ້ງຢືນການແປທີ່ຖືກຕ້ອງ:

- ☐ ສຳເນົາໜັງສືທີ່ຜູ້ສະໝັກໄດ້ຮັບຈາກສູນກາງວີຊາ (ສຳລັບວີຊາລໍອດເຕີລີ, ວີຊາຄູ່ໝັ້ນ, ວີຊາລູກລ້ຽງ, ວີຊາລີ້ໄພ ແມ່ນບໍ່ຕ້ອງການ)
- ☐ ໜັງສືຜ່ານແດນທີ່ຍັງບໍ່ໝົດອາຍຸ ແລະ ມີອາຍຸການນຳໃຊ້ 6 ເດືອນກ່ອນມື້ເຂົ້າປະເທດສະຫະລັດອາເມລິກາ ແລະ ຕ້ອງສຳເນົາໜ້າໜັງສືຜ່ານແດນ (ທີ່ມີຮູບ ແລະ ຂໍ້ມູນຂອງຜູ້ສະໝັກ).
- ☐ ຮູບຫາກາຖ່າຍ ສຳຫລັບຂໍວີຊາ 2 ໃບຂະໜາດ (5 cm x 5 cm, or 2 inch x 2 inch) ຂອງຜູ້ສະໝັກແຕ່ລະຄົນ. ກະລຸນາເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບຄຸນລັກສະນະສະເພາະຂອງຮູບໄດ້ທີ່ online photo requirements
- ☐ ໜັງສືຢືນຢັນຂອງແບບຟອມສະໝັກ DS-260 ຂອງຜູ້ສະໝັກວີຊາຖາວອນແຕ່ລະຄົນທີ່ຜູ້ສະໝັກໄດ້ຍື່ນອອນໄລ໌ທີ່ ceac.state.gov/iv.

  ປື້ມສຳມະໂນຄົວທີ່ເປັນຕົ້ນສະບັບ(ເຊິ່ງມີຮູບຖ່າຍແຕ່ລະຄົນຕິດຢູ່)
  ຢ່າເຮັດປື້ມສຳມະໂນຄົວໃຫ່ມເພື່ອທີ່ຈະມາສຳພາດ. ຖ້າທ່ານມີປື້ມສຳມະໂນຄົວຫົວໃຫ່ມ ໃຫ້ເອົາທັງຫົວເກົ່າທີ່ຖືກຍົກເລີກ ຫລື ກອບປີ້ເອົາສະບັບສຳເນົາມາພ້ອມ. ຕ້ອງເອົາປື້ມສຳມະໂນຄົວທີ່ເປັນຕົ້ນສະບັບມາພ້ອມ.

  ໃບຢັ້ງຢືນການເກີດຂອງຜູ້ສະໝັກແຕ່ລະຄົນ ທັງຕົ້ນສະບັບ ແລະ ສະບັບສຳເນົາ. ສຳລັບກໍລະນີລູກປະກັນເອົາພໍ່ແມ່ ແລະອ້າຍເອື້ອຍນ້ອງປະກັນເອົາ, ທ່ານຕ້ອງຍື່ນໃບຢັ້ງຢືນການເກີດຕົ້ນສະບັບຂອງຜູ້ຮັບປະກັນເພີ່ມເຕີມ. ຖ້າທ່ານບໍ່ເອົາເອກະສານທີ່ເປັນຕົ້ນສະບັບມາກັບທ່ານເວລາມາສຳພາດ ວີຊາຂອງທ່ານອາດຖືກປະຕິເສດ. ເອກະສານທີ່ເປັນຕົ້ນສະບັບບໍ່ໄດ້ຢູ່ໃນແຟ້ມເອກະສານທີ່ມາຈາກສະຫະລັດອາເມລິກາ ຈະຕ້ອງຖືເອກະສານທີ່ເປັນຕົ້ນສະບັບມານຳທ່ານເວລາມາສຳພາດ. ໝາຍເຫດ:ໃບແຈ້ງເກີດທີ່ອອກຫລັງປີ 2008 ຕ້ອງອອກຈາກຫ້ອງການເມືອງເທົ່ານັ້ນ. ອອກຈາກບ້ານແມ່ນບໍ່ຮັບ.
- ☐ *ຊອງຜົນກວດສຸຂະພາບທີ່ຍັງບໍ່ຖືກເປີດ(ທີ່ທ່ານໝໍເອົາຜົນກວດສຸຂະພາບໃຫ້ທ່ານ)*. ທ່ານຄວນນັດກວດສຸຂະພາບຢ່າງໜ້ອຍ 3ອາທິດກ່ອນທີ່ຈະມາສຳພາດ. ຖ້າຫາກທ່ານບໍ່ມີຜົນກວດສຸຂະພາບເວລາມາສຳພາດ ຄຳຮ້ອງຂໍວີຊາຂອງທ່ານອາດຖືກປະຕິເສດ.

ກັບຄືນໄປເບິ່ງດ້ານເທິງ

## ລາຍການກວດສອບກ່ອນການ

- ☐ ໃຫ້ເອົາຫລັກຖານການປ່ຽນຊື່ມາພ້ອມຖ້າມີ
- ☐ ກໍລະນີ ລູກປະກັນເອົາພໍ່ແມ່ ແລະອ້າຍເອື້ອຍນ້ອງປະກັນເອົາ ໃຫ້ເອົາຫລັກຖານການປ່ຽນຊື່ຂອງຜູ້ຮັບປະກັນຖ້າມີ.
- ☐ ໃບຢັ້ງຢືນການເກີດຂອງລູກແຕ່ລະຄົນຂອງຜູ້ສະໝັກຫລັກ ທັງຕົ້ນສະບັບ ແລະ ສະບັບສຳເນົາ (ເຖິງແມ່ນວ່າລູກຈະບໍ່ສະໝັກວີຊານຳ)
- ☐ ໃບແຈ້ງໂທດຈາກແຂວງທີ່ທ່ານເຄີຍໄປຢູ່ເກີນ 6ເດືອນຂຶ້ນເມືອ ຫລັງຈາກອາຍຸ16ປີຂຶ້ນໄປ.
- ☐ ບັດປະຈຳຕົວ ຕົ້ນສະບັບ ແລະສຳເນົາ

ຜູ້ສະໝັກຄວນເອົາເອກະສານທັງໝົດ (ທັງສຳເນົາ ແລະຕົ້ນສະບັບ) ເພື່ອທີ່ຈະມາສຳພາດ.

ກົງສູນຕ້ອງການເບິ່ງເອກະສານທັງໝົດທີ່ເປັນຕົ້ນສະບັບ

ເຖິງແມ່ນຜູ້ຮັບປະກັນຈະຍື່ນເອກະສານຕົ້ນສະບັບໃຫ້ ຫ້ອງການກວດຄົນເຂົ້າເມືອງແລະສັນຊາດກໍ່ຕາມ. ໝາຍເຫດ: ພວກເຮົາຈະບໍ່ສົ່ງເອກະສານຕົ້ນສະບັບຄືນ ຖ້າທ່ານບໍ່ມີສະບັບສຳເນົາ. ເອກະສານທີ່ເປັນພາສາລາວ ພວກເຮົາບໍ່ໄດ້ຕ້ອງການໃຫ້ແປ.

ຜູ້ສະໝັກທີ່ຕົກໃນເງື່ອນໄຂລະບຸທີ່ຂຽນເປັນໂຕໜັງສືເນັ້ງລຸ່ມນີ້
ຄວນກະກຽມເອກະສານເພີ່ມເຕີມລຸ່ມນີ້ມາພ້ອມ:

*ສຳລັບຜູ້ສະໝັກວີຊາທີ່ຄອບຄົວຮັບປະກັນເອົາ:*

ແບບຟອມຄ້ຳປະກັນ I-864 ທີ່ຮັບປະກັນທາງດ້ານການເງິນຂອງແຕ່ລະຜູ້ຄ້ຳປະກັນທາງດ້ານການເງິນ ເຊິ່ງຕິດຄັດມາພ້ອມເອກະສານສຳເນົາ IRS ຫຼື ໜັງສືການຫັກອາກອນລາຍໄດ້ສະບັບຫຼ້າສຸດ ພ້ອມດ້ວຍແບບຟອມ W-2s ທີ່ກ່ຽວຂ້ອງຂອງຜູ້ຄ້ຳປະກັນ.

ຖ້າທ່ານຢາກລວມລາຍໄດ້ສ່ວນຕົວຂອງທ່ານກັບພາສີລາຍໄດ້ຂອງຄູ່ສົມລົດ ຫລືຊະມາຊິກໃນຄອບຄົວຄົນອື່ນໆ ທ່ານຕ້ອງຍື່ນແບບຟອມ I-864A ສຳລັບສະມະຊິກໃນຄອບຄົວແຕ່ລະຄົນ

ກັບຄືນໄປເບິ່ງດ້ານເທິງ

ພ້ອມກັບຫລັກຖານພິສູດສະຖານະພາບທີ່ຖືກກົດໝາຍຢູ່ອາເມລິກາຢ່າງຖືກຕ້ອງ.(ສຳເນົາໃບຕັດສັນຊາດ, ໃບຂຽວ,ໜັງສືເດີນທາງອາເມລິກາ,ຫລືໃບແຈ້ງເກີດ).

- ຟອມ I-864 ແມ່ນມີຄວາມຈຳເປັນເຊິ່ງສະແດງວ່າຜູ້ຮັບປະກັນສາມາດຮັບຜິດຊອບກ່ຽວກັບດ້ານການເງິນໃຫ້ຜູ້ຖືກຮັບປະກັນ. ຄຳຮ້ອງຂອງທ່ານອາດຖືກປະຕິເສດຂຶ້ນກັບລາຍຮັບດ້ານການເງິນຈຳກັດ ຫລືຖ້າທ່ານຍື່ນຟອມກ່ຽວກັບການເງິນຜິດ. ຮຽນຮູ້ເພີ້ມເຕີມກ່ຽວກັບລາຍຮັບທີ່ຕ້ອງການ ກະລຸນາເຂົ້າເວບໄຊສນີ້.

- ຖ້າທ່ານຮູ້ວ່າຜູ້ຮັບປະກັນວີຊາຖາວອນ ບໍ່ມີລາຍໄດ້ພຽງພໍ ທີ່ຈະສະໜັບສະໜູນທ່ານ , ກະລຸນາກວງເວບໄຊສນີ້. ຜູ້ຮັບປະກັນອາດຈະຂໍຜູ້ຮັບປະກັນຮ່ວມ ທາງດ້ານການເງິນກ່ຽວກັບຄຳຮ້ອງວີຊາຖາວອນ ເພື່ອທີ່ຈະມີລາຍໄດ້ທີ່ຕາມທີ່ຕ້ອງການ. ຜູ້ຮັບປະກັນຮ່ວມທີ່ບໍ່ແມ່ນຄົນໃນຄອບຄົວ ຕ້ອງໄດ້ຍື່ນຟອມ I-864.
- ຜູ້ຮັບປະກັນຮ່ວມອາດເປັນຄົນໃນຄອບຄົວດຽວກັນ. ບາງກໍລະນີຜູ້ຮັບປະກັນຮ່ວມອາດຍື່ນຟອມ I-864A ລວມທັງຫລັກຖານພິສູດສະຖານະພາບທີ່ຖືກກົດໝາຍຢູ່ໃນສະຫະລັດອາເມລິກາ (ສຳເນົາໃບຕັດສັນຊາດ, ບັດຂຽວ ແລະໜັງສືເດີນອາເມລິກາ,ໃບແຈ້ງເກີດ).

- ຜູ້ສະຮັບປະກັນຮ່ວມຕ້ອງມີສຳເນົາຂອງອາກອນລາຍໄດ້ ແລະ ພິສູດສະຖານະພາບທີ່ຖືກກົດໝາຍໃນສະຫະລັດອາເມລິກາ(ເຊັ່ນສຳເນົາໜັງສືເດີນທາງອາເມລິກາ, ບັດຂຽວ, ໃບຕັດສັນຊາດ.)

☐ ຫຼັກຖານສາຍພົວພັນລະຫວ່າງຜູ້ຮັບປະກັນ ແລະ ຜູ້ສະໝັກຂໍວີຊາ (ເຊັ່ນຮູບເກົ່ານຳກັນຫລືຫັລກຖານພິສູດສາຍສຳພັນຂອງຜູ້ຄ້ຳປະກັນທີ່ອ້າງອີງ).

☐ *ຖ້າວ່າຜູ້ສະໝັກແຕ່ງງານແລ້ວໃຫ້ເອົາ* ໃບຢັ້ງຢືນການແຕ່ງງານຕົ້ນສະບັບ ແລະ ສະບັບສຳເນົາມາພ້ອມ

☐ *ຖ້າວ່າຜູ້ສະໝັກເຄີຍແຕ່ງງານມາກ່ອນ:* ໃບຢັ້ງຢືນການຢ່າຮ້າງ ຫຼື ໃບຢັ້ງຢືນການຕາຍຂອງຄູ່ຜົວ/ເມຍຕົ້ນສະບັບ ແລະ ສະບັບສຳເນົາມາພ້ອມ.

☐ *ສຳລັບກໍລະນີຜົວເມຍຜູ້ປະກັນຕ້ອງເອົາໃບສິ້ນສຸດການແຕ່ງງານ ຕົ້ນສະບັບ ຂອງຄູ່ສົມລົດເກົ່າ.*

# ລາຍການກວດສອບກ່ອນການ

- [ ] *ຖ້າຜູ້ສະໝັກມີອາຍຸຫຼາຍກວ່າ 16 ປີ:* ໃບແຈ້ງໂທດຈາກບ່ອນທີຜູ້ສະໝັກຢູ່ປັດຈຸບັນໃນປະເທດຕົນເອງ ແລະ ທີຢູ່ອື່ນໆນອກປະເທດທີຜູ້ສະໝັກເຄີຍຢູ່ມາ. ຖ້າທັງໝົດ3ຂໍ້ລຸ່ມນີ້ຖືກຕ້ອງ, ຜູ້ສະໝັກຕ້ອງເອົາໃບແຈ້ງໂທດປະຈຸບັນເຂົ້າມາສໍາພາດ:

    1. ຜູ້ສະໝັກອາຍຸຫຼາຍກວ່າ 16 ປີ;
    2. ໃບແຈ້ງໂທດສະບັບທີ່ຜູ້ສະໝັກມີອອກໄດ້ເກີນໜຶ່ງປີແລ້ວ; ແລະ
    3. ຜູ້ສະໝັກຍັງອາໄສຢູ່ປະເທດທີອອກໃບແຈ້ງໂທດສະບັບນັ້ນ.

- [ ] *ສໍາລັບຜູ້ສະໝັກວີຊາທີນາຍຈ້າງຮັບປະກັນເອົາ:* ໃຫ້ເອົາໜັງສືຈາກນາຍຈ້າງອາເມລິກາທີອອກບໍ່ເກີນໜຶ່ງເດືອນມາພ້ອມ.

- [ ] *ຖ້າຜູ້ສະໝັກເຄີຍຖືກຕັດສິນລົງໂທດອາຊະຍາກໍາ:* ໃຫ້ເອົາເອກະສານຕັດສິນຈາກສານ ແລະ ໜັງສືບັນທຶກຄະດີ ຕົ້ນສະບັບ ແລະ ສະບັບສໍາເນົາມາພ້ອມ.

- [ ] *ຖ້າຜູ້ສະໝັກເຄີຍເປັນທະຫານຢູ່ປະເທດໃດໜຶ່ງມາກ່ອນ:* ໃຫ້ເອົາໜັງສືບັນທຶກການເປັນທະຫານ ຕົ້ນສະບັບ ແລະ ສະບັບສໍາເນົາມາພ້ອມ(ບໍ່ມີຢູ່ລາວ).

- [ ] *ຖ້າຜູ້ສະໝັກຖືກຮັບມາເປັນລູກລ້ຽງ:* ໃຫ້ເອົາເອກະສານກ່ຽວກັບການເປັນລູກລ້ຽງ ແລະ ເອກະສານກ່ຽວກັບສິດໃນການລ້ຽງດູ ຕົ້ນສະບັບ ແລະ ສະບັບສໍາເນົາມາພ້ອມ.

- [ ] *ຖ້າຜູ້ສະໝັກແມ່ນລູກລ້ຽງຂອງຜູ້ຮັບປະກັນ:* ໜັງສືແຕ່ງງານຕົ້ນສະບັບ ແລະ ສະບັບສໍາເນົາລະຫວ່າງຜູ້ຮັບປະກັນ ແລະ ພໍ່/ ແມ່ຄີງ ຂອງຜູ້ສະໝັກ ແລະ ໜັງສືການຢ່າຮ້າງຂອງພໍ່ແມ່ຝ່າຍໃດຝ່າຍໜຶ່ງທີ່ເຄີຍແຕ່ງງານ. ຖ້າວ່າພໍ່/ແມ່ຄີງທີແຕ່ງງານກັບຜູ້ຮັບປະກັນມີສະຖານະທີຖືກຕ້ອງຕາມກົດໝາຍຢູ່ອາເມລິກາ ຜູ້ສະໝັກຕ້ອງຍື່ນສໍາເນົາຫຼັກຖານຂອງສະຖານະດັ່ງກ່າວ (ອາດຈະເປັນ ບັດຂຽວ, ໃບຕັດສັນຊາດ, ໃບອານຸຍາດການເຮັດວຽກທີຖືກຕ້ອງຕາມກົດ ໝາຍ)

ກັບຄືນໄປເບິ່ງດ້ານເທິງ

# ຄຳແນະນຳສຳລັບເຂົ້າສຳພາດ

## ການເຮັດມື້ນັດ ຫລື ການຍົກເລີກມື້ນັດສຳພາດຂອງທ່ານ.

ໃນການເຮັດມື້ນັດ ອາດຕ້ອງໃຊ້ເວລາດົນ ຈົນກວ່າຈະມີມື້ນັດຕໍ່ໄປ, ກະລຸນາມາຕາມມື້ນັດສຳພາດ
ທີ່ໄດ້ນັດໄວ້ແລ້ວ. ສຳລັບວີຊາທີ່ເປັນຄອບຄົວຮັບປະກັນ ແລະ ວີຊາວ່າຈ້າງງານ
ເມື່ອຮອດຄິວນັດສຳພາດໃນເດືອນ ນັ້ນ. ຜູ້ສະໝັກວີຊາລ໋ອດຕາລີ ຄວນຈະຮັບຮູ້ວ່າ
ວີຊາເຫລົ່ານີ້ແມ່ນມີຈຳນວນນ້ຳເບີຈຳກັດ ແລະ ຕ້ອງໄດ້ອອກກ່ອນວັນທີ 30 ເດືອນກັນຍາ
ຂອງແຜນການປະຈຳປີ. ບໍ່ໄສາມາດຮັບປະກັນວ່າ ວີຊານ້ຳເບີຍັງຈະເຫລືອຢູ່
ຖ້າວ່າທ່ານນັດສຳພາດຄືນໃຫມ່.ກະລຸນາສຶກສາລະອຽດກ່ຽວກັບ[ວີຊາບູລາຕິນ]ກ່ອນທີ່ທ່ານຈະຕັດສິນໃຈເຮັດມື້ນັດ
ສຳພາດ.

ຖ້າວ່າທ່ານບໍ່ສາມາດເຂົ້າມາສຳພາດ, ກະລຸນາຕິດຕໍ່ກັບພະແນກກົງສູນໂດຍການຂຽນອີເມວຫາ
CONSLAO@state.gov ທັນທີ.

## ກົດລະບຽບຂອງການກວດກາຄວາມປອດໄພ.

ທຸກຄົນທີ່ເຂົ້າມາສະຖານທູດອາເມລິກາ ທີ່ນະຄອນຫລວງວຽງຈັນ
ຕ້ອງປະຕິບັດຕາມກົດລະບຽບຄວາມປອດໄພຢ່າງເຂັ້ມງວດ. ທຸກໆຄົນທີ່ ປະຕິເສດ ໃຫ້ກວດກາຄວາມປອດໄພ
ໂດຍເຈົ້າຫນ້າທີ່ຮັກສາຄວາມປອດໄພ ຈະບໍ່ອະນຸຍາດໃຫ້ ເຂົ້າມາໃນສະຖານທູດ. ທ່ານຈະບໍ່ອະນຸຍາດໃຫ້ນຳເອົາ
ອຸບປະກອນທີ່ເປັນແບດເຕີລີ ຫລື ເຄື່ອງອີເລັກໂຕຣນິກ. ກະເປົາໃຫຍ່ຫລືກະເປົາເດີນທາງ, ອາຫານ ແລະ
ຂອງແຫຼວທຸກຊະນິດເຂົ້າມາໃນສະຖານທູດ.
ເພື່ອຫລີກລ້ຽງການຊັກຊ້າເສຍເວລາໃນການເຂົ້າມາຂ້າງໃນຂອງທ່ານ ແລະ
ຜູ້ສະຫມັກທີ່ຢືນຕໍ່ແຖວຫລັງຂອງທ່ານ ກະລຸນານຳເອົາເອກກະສານທີ່ຈຳເປັນໃນການເຂົ້າສຳພາດເທົ່ານັ້ນ.

ກັບຄືນໄປເບິ່ງດ້ານເທິງ

# ຄຳແນະນຳສຳລັບເຂົ້າສຳພາດ

## ບຸກຄົນທີ່ຕິດຕາມເຂົ້າມາ.

ບຸກຄົນເຫຼົ່ານີ້ທີ່ສາມາດຕິດຕາມຜູ້ສະຫມັກວີຊາເຂົ້າມາສຳພາດ.

- ນາຍແປພາສາ: ເວລາເຂົ້າມາສຳພາດ ຜູ້ສະຫມັກອາດຈະພານາຍແປພາສາຫນຶ່ງຄົນມານຳ ຖ້າວ່າພວກເຂົາເຈົ້າ ບໍ່ເວົ້າພາສາອັງກິດ, ລາວ ຫລື ມົ້ງດີພໍ
- ຜູ້ຢ້ຽມຢາມກໍລະນີພິເສດ: ຜູ້ສະຫມັກອາດຈະພາຄົນຜູ້ຫນຶ່ງເຂົ້າມານຳ ຖ້າຫາກວ່າ ພວກເຂົາເຈົ້າມີອາຍຸສູງ, ພິການ, ຫລື ວ່າເປັນເດັກນ້ອຍ.
- ຜູ້ຮັບປະກັນແມ່ນຍິນດີໃຫ້ເຂົ້າມາສຳພາດນຳໄດ້.
- ທະນາຍຄວາມແມ່ນບໍ່ອະນຸຍາດໃຫ້ຕິດຕາມມາກັບຜູ້ສະຫມັກ ເຂົ້າມາໃນຫ້ອງລໍຖ້າເພື່ອສຳພາດ

## ຄ່າທຳນຽມສະຫມັກວີຊາຖາວອນ

ຖ້າຫາກວ່າທ່ານບໍ່ໄດ້ຈ່າຍຄ່າທຳນຽມທີ່ຕ້ອງການທັງຫມົດໃຫ້ສູນກາງວີຊາ, ກະລຸນາກຽມເງິນເພື່ອຈ່າຍຄ່າທຳນຽມ ໃນມື້ທີ່ທ່ານເຂົ້າມາສຳພາດ. ຄ່າທຳນຽມທັງຫມົດອາດຈະຈ່າຍເປັນເງິນໂດລາ ຫລືເງິນກີບກໍໄດ້ ມີຄ່າເທົ່າກັນ. ພວກເຮົາຮັບເປັນເງິນສົດເທົ່ານັ້ນ. ໃຫ້ຮູ້ວ່າຖ້າທ່ານຖືກພົບເຫັນບໍ່ມີສິດທີ່ຈະໄດ້ຮັບວີຊາ, ເງິນຈ່າຍຄ່າທຳນຽມຈະບໍ່ໄດ້ສົ່ງຄືນ. ລາຍການຄ່າທຳນຽມທັງຫມົດສາມາດເບິ່ງໄດ້ຢູ່ນີ້.

## ບໍ່ໃຫ້ວາງແຜນເດີນທາງອອກນອກປະເທດລາວ

ຖ້າຫາກວ່າວີຊາຂອງທ່ານຖືກອະນຸມັດ, ພວກເຮົາຈະເອົາຫນັງສືຜ່ານແດນຂອງທ່ານໄວ້ໃນສະຖານທູດ ເພື່ອວ່າຈະກຽມເຮັດຊອງເອກະສານເດີນທາງ ແລະ ພິມວີຊາຕິດໃສ່ຫນັງສືຜ່ານແດນຂອງທ່ານ. ໃນເວລາທີ່ວີຊາຂອງທ່ານຖືກອະນຸມັດແລ້ວ ພວກເຮົາຈະແຈ້ງໃຫ້ທ່ານຮູ້ວ່າເມື່ອໃດທ່ານສາມາດເຂົ້າມາເອົາວີຊາໄດ້ ພ້ອມຈະອອກໃບນັດມາເອົາວີຊາ. ຖ້າໃນກໍລະນີທີ່ທ່ານຈະເດີນທາງພາຍໃນປະເທດລາວ ໃນຂະນະທີ່ຫນັງສືຜ່ານແດນຂອງທ່ານຍັງຢູ່ນຳພວກເຮົາ, ກະລຸນາກວດເບິ່ງວ່າທ່ານມີບັດປະຈຳຕົວທີ່ມີຮູບທ່ານຕິດຢູ່ໃນບັດນັ້ນໃຊ້ໄດ້ແທນຫນັງສືຜ່ານແດນ.

ກັບຄືນໄປເບິ່ງດ້ານເທິງ

## ຫຼັງຈາກການສໍາພາດ

ເຈົ້າໜ້າທີ່ກົງສູນຈະສາມາດຕັດສິນໃຈກ່ຽວກັບຄໍາຮ້ອງຂໍວີຊາ ກໍ່ຕໍ່ເມື່ອເຈົ້າໜ້າທີ່ໄດ້ກວດກາເບິ່ງຄໍາຮ້ອງ ແລະໄດ້ສໍາພາດຜູ້ສະໝັກ. ພວກເຮົາບໍ່ສາມາດຮັບປະກັນໄດ້ວ່າທ່ານຈະໄດ້ຮັບວີຊາ.ກະລຸນາ ຢ່າຂາຍເຮືອນ,ລົດ ຫລືຊັບສິນຕ່າງໆຂອງທ່ານ, ຢ່າລາອອກຈາກວຽກຫລືຊື້ປີ້ຍົນທີ່ບໍ່ສາມາດສົ່ງເງິນຄືນໄດ້ ຫລືຈັດຕາຕະລາງການເດີນທາງອື່ນໆໄວ້ ຈົນກ່ວາທ່ານຈະໄດ້ຮັບວີຊາຖາວອນ.

### ກໍລະນີຕ້ອງການເອກກະສານເພີ້ມເຕີມ

ບາງຄັ້ງເຈົ້າໜ້າທີ່ກົງສູນບໍ່ສາມາດຕັດສິນກ່ຽວກັບຄໍາຮ້ອງຂໍວີຊາໄດ້ທັນທີ ເພາະວ່າເຈົ້າໜ້າທີ່ກົງສູນຕ້ອງການທີ່ກວດເບິ່ງເອກະສານເພີ້ມເຕີມຫລື ເຄດເລື້ອງຂອງທ່ານເພື່ອກວດສອບເພີ້ມເຕີມ. ໃນກໍລະນີຕ້ອງການເອະສານເພີ້ມເຕີມ, ເຈົ້າໜ້າທີ່ກົງສູນຈະເອົາໜັງສືໃຫ້ທ່ານເຊິ່ງຈະລະບຸຄໍາແນະນໍາຢ່າງລະອຽດວ່າຕ້ອງການໜັງສືຫັຍງແດ່ທີຈະເອົາມາສະຖານທູດ. ຂັ້ນຕອນການກວດສອບອາດສືບຕໍ່ເວລາພາຍຫລັງການສໍາພາດ. ໂດຍທົ່ວໄປແລ້ວຂັ້ນຕອນກວດສອບຈະແລ້ວພາຍໃນ 60ມື້. ເຖິງຢ່າງໃດກໍ່ຕາມ ໃນໄລຍະເວລາແມ່ນຂື້ນກັບສະຖານະການຂອງເຄດເລື້ອງຂອງແຕ່ລະເຄດ. ກ່ອນທີ່ຈະຕິດຕໍ່ສອບຖາມ ,ກະລຸນາລໍຖ້າຢ່າງໜ້ອຍ 60ມື້ ຫລັງຈາກສໍາພາດ.

# ຫຼັງຈາກການສຳພາດ

## ກໍລະນີວີຊາຖືກອະນຸມັດ

ໜັງສືຜ່ານແດນ, ວີຊາ ແລະຊອງເອກະສານທີ່ມີກາປະທັບ-
ພວກເຮົາຈະຕິດວີຊາຖາວອນໃສ່ໜ້າເຈ້ຍໜັງສືເດີນທາງຂອງທ່ານ.
ກະລຸນາກວດເບິ່ງວີຊາຂອງທ່ານເພື່ອແນ່ໃຈວ່າຂໍ້ມູນຖືກຕ້ອງ. ພວກເຮົາຍັງຈະເອົາຊອງໜັງສື
ທີ່ມີກາປະທັບໃຫ້ທ່ານ ເຊິ່ງຊອງນັ້ນບັນຈຸເອກະສານຕ່າງໆ
ທີ່ທ່ານຕ້ອງເອົາໃຫ້ເຈົ້າໜ້າທີ່ກວດຄົນເຂົ້າເມືອງເມື່ອໄປຮອດສະຫະລັດເອເມລິກາຄັ້ງທຳອິດ.
**ຫ້າມເປີດຊອງເດັດຂາດ**,ທ່ານຕ້ອງຖືຕິດຕົວກັບທ່ານ,ຫ້າມເອົາໃສ່ຫີບເຄື່ອງເດັດຂາດ.
ຖ້າທ່ານໄດ້ຮັບຜົນກວດເອັສສະເລ້ ໃນຕອນກວດສຸຂະພາບ,
ທ່ານຕ້ອງຖືຜົນກວດດັ່ງກ່າວໄປນຳເພື່ອເອົາໃຫ້ເຈົ້າໜ້າທີ່ກວດຄົນເຂົ້າເມືອງຂອງສະຫະລັດ.
ຄ່າທຳນຽມເຂົ້າອາໃສຢູ່ຖາວອນຂອງ ຫ້ອງການກວດຄົນເຂົ້າເມືອງແລະສັນຊາດ-
ທຸກໆທ່ານຢູ່ນອກປະເທດທີ່ໄດ້ຖືກອະນຸມັດວີຊາຖາວອນຈະຕ້ອງໄດ້ເສຍຄ່າທຳນຽມອາໃສຢູ່ຖາວອນໃຫ້ແກ່ຫ້ອງກ
ານກວດຄົນເຂົ້າເມືອງແລະສັນຊາດ ກ່ອນທ່ານທີ່ຈະເດີນທາງໄປສະຫະລັດອາເມລິກາ.
ຄ່າທຳນຽມດັ່ງກ່າວແມ່ນຈະໃຊ້ໃນຂັ້ນຕອນດຳເນີນການເປັນຜູ້ຢູ່ອາໃສແລະເພື່ອເຮັດບັດອະນຸຍາດ
ຢູ່ຖາວອນ(ບັດຂຽວ). ບຸກຄົນທີ່ຖືກຍົກເວັ້ນບໍ່ໄດ້ສຳລະຄ່າທຳນຽມແມ່ນເດັກນ້ອຍເຂົ້າໃນສະຫະລັດ
ໃນຖານະລູກບຸນທຳ (Hague Process), ບຸກຄົນທີ່ມີສະຖານະຢູ່ຖາວອນມາກ່ອນທີ່ຕ້ອງການກັບຄືປະເທດ
ແລະບຸກຄົນທີ່ໄດ້ຮັບວີຊາຄູ່ໝັ້ນ.

ເມື່ອໃດທີ່ທ່ານຄວນເດີນທາງ- ທ່ານຈະຕ້ອງເຂົ້າສະຫະລັດອາເມລິກາກ່ອນທີ່ວີຊາຂອງທ່ານຈະໝົດອາຍຸ
ການນຳໃຊ້,ໂດຍທົ່ວໄປແລ້ວວີຊາຈະນຳໃຊ້ໄດ້ຫົກເດືອນ (6)ເດືອນຫລັງຈາກມື້ພິມວີຊາ.
ວີຊາຂອງທ່ານຈະບໍ່ສາມາດຕໍ່ອາຍຸໄດ້ແລະ ຄ່າທຳນຽມທັງໝົດແມ່ນບໍ່ສົ່ງຄືນ. ຜູ້ສະໝັກຫລັກ
ຈະຕ້ອງເຂົ້າອາເມລິກາກ່ອນຫລືພ້ອມກັບສະມະຊິກຄອບຄົວທີ່ໄດ້ຮັບວີຊາ.
ເວັ້ນເສຍວ່າບຸກຄົນດັ່ງກ່າວວ່າມີເງື່ອນໄຂທີ່ຈະໄດ້ຮັບຜົນປະໂຫຍດພາຍໃຕ້ກົດ ໝາຍປົກປ້ອງເດັກ. (Child protection status act), ເດັກນ້ອຍທີ່ໄດ້ຖືກອະນຸມັດວີຊາກ່ອນຮອດອາຍຸ 21ປີ
ຈະຕ້ອງໄດ້ເຂົ້າສະຫະລັດອາເມລິກາກ່ອນອາຍຸ 21ປີ
ເພື່ອຫລີກລ້ຽງການສູນເສຍສະຖານະພາບການຢູ່ຖາວອນຂອງເຂົາເຈົ້າ.

ຂັ້ນຕອນການຮັບເອົາບັດຂຽວ- ແບບຟອມ I-551 ບັດຢູ່ຖາວອນເຊິ່ງເອີ້ນກັນວ່າບັດຂຽວ,
ເຊິ່ງຈະຖືກສົ່ງໄປອັດຕະໂນມັດ ຢູ່ສະຫະລັດອາເມລິກາຕາມແບບຟອມທີ່ຂຽນຄຳຮ້ອງຂໍວີຊາ.
ເອກະສານນີ້ແມ່ນສຳຄັນທີ່ສຸດເຊິ່ງສະແດງເປັນຫລັກຖານວ່າທ່ານມີສິດດຳລົງຊີວິດຢູ່ສະຫະລັດເອເມລິກາ.

## ຫຼັງຈາກການສຳພາດ

ຖ້າທ່ານມີແຜນເດີນທາງອອກນອກປະເທດສະຫະລັດອາເມລິກາ ກ່ອນໄດ້ຮັບບັດຂຽວ.
ກະລຸນາເຂົ້າໄປເບິ່ງເວບໄຊເພື່ອປຶກສາກັບຫ້ອງການກວດຄົນເຂົ້າເມືອງແລະສັນຊາດ
ແລະດ່ານກວດຄົນເຂົ້າເມືອງ(USCIS),(CBP)
ທີ່ກົດລະບຽບຕ່າງໆກ່ຽວກັບເອກະສານຫັຍງທີ່ທ່ານຕ້ອງແຈ້ງເຂົ້າກັບປະເທດຄືນ.
ພວກເຮົາແນະນຳໃຫ້ທ່ານເຊັກລາຍລະອຽດກັບສາຍການບິນເພື່ອໝັ້ນໃຈວ່າສາຍການບິນນັ້ນຮັບຮູ້ແລະນຳໃຊ້ກົດລະບຽບນີ້ຄືກັນ. ເມື່ອບັດຂຽວຂອງທ່ານຖືກອະນຸມັດແລ້ວ
ທ່ານບໍ່ຄວນອາໃສຢູ່ນອກປະເທດສະຫະລັດອາເມລິກາເກີນກ່ວາໜຶ່ງປີ.
ຖ້າທ່ານຢູ່ເກີນທ່ານຈະເສຍສະຖານະພາບຂອງການໄດ້ບັດຂຽວ.

ບັນຫາເດັກນ້ອຍ-ໃນສະຫະລັດອາເມລິກ,ເດັກນ້ອຍຈະຕ້ອງໄດ້ຮັບການສັກວັກຊີນ
ກ່ອນທີ່ພວກເຂົາຈະສາມາດສະໝັກເຂົ້າໂຮງຮຽນໄດ້.
ພວກເຮົາແນະນຳໃຫ້ທ່ານເອົາບັນທືກາການສັກວັກຊີນຂອງລູກທ່ານເອົາໄປສະຫະລັດອາເມລິການຳ.
ຖ້າລູກຂອງທ່ານເປັນລູກລ້ຽງ,
ທ່ານຈະມີສິດເຕັມທີໃນການດູແລລູກຂອງທ່ານໃນກໍລະນີເກີດມີການຢ່າຮ້າງກັນຫລື
ມີສິດລ້ຽງດູໃນຕົວເດັກນຳກັບທ່ານຄວນເອົາສຳເນົາເອກະສານຂໍເປັນລູກລ້ຽງຫລືເອກະສານສິດໃນຕົວເດັກຈາກເຈົ້າໜ້າທີ່ສານຢູ່ໃນປະເທດຂອງທ່ານ. ທ່ານຕ້ອງການເອສະສານນີ້ເພື່ອທີ່ຈະຂໍສະໝັກເຂົ້າໂຮງຮຽນ, ການປິ່ນປົວ
ແລະກ່ຽວກັບສັນຊາດ.

ຂໍ້ມູນກ່ຽວກັບຜູ້ອົບພະຍົບໃໝ່-
ກະລຸນາເບິ່ງທີ່ເວັບໄຊສຳລັບຂໍ້ມູນທີ່ສຳຄັນໃນການທີ່ຈະອົບພະຍົກໄປສະຫະລັດອາເມລິກາ.
ທ່ານສາມາດອ່ານແຈ້ງການຂອງພວກເຮົາທາງອອນລາຍ “Welcome to the United States: A Guide for New Immigrants”

ກັບຄືນໄປເບິ່ງດ້ານເທິງ

# ຜູ້ສະໝັກຂໍວີຊ່າລ໋ອດຕາລີ- ຂໍ້ມູນເພີ່ມເຕີມ

ຖ້າຫາກວ່າທ່ານຂໍວີຊ່າລ໋ອດຕາລີ, ຄໍາແນະນໍາຂ້າງເທິງນີ້ເໝາະສົມກັບທ່ານແລ້ວ. ກະລຸນານັດໝາຍ ແລະ ກວດສຸຂະພາບກ່ອນເພື່ອຈະໄດ້ສໍາພາດຂໍວີຊາ, ລົງທະບຽນແລະກະກຽມເອກະສານທີ່ເຮົາຕ້ອງການ.

ຂ້າງລຸ່ມແມ່ນຄໍາແນະນໍາເພີ່ມຕື່ມທີ່ເໝາະສົມສໍາຫລັບທຸກຄົນທີ່ສໍາພາດວີຊາລ໋ອດຕາລີ້

## Bring to your interview ສິ່ງທີ່ຕ້ອງຈັດຕຽມມາຕອບສໍາພາດ

ນອກຈາກເອກະສານທີ່ຂຽນໄວ້ຢູ່ໃນລາຍການຕຽມຕົວສໍາພາດນີ້ແລ້ວ, ຜູ້ສະໝັກຂໍວີຊາລ໋ອດຕາລີ ຄວນເອົາເອກະສານດັ່ງລຸ່ມນີ້ມາພ້ອມຕອນສໍາພາດ

- ☐ ຂໍ້ມູນຂອງການນັດສໍາພາດ ຕ້ອງໄດ້ພິມອອກຈາກ “Entrant Status Check” ຈາກ E-DV website
- ☐ ເອກະສານສະແດງໃຫ້ເຫັນວ່າທ່ານຮຽນຈົບມັດທະຍົມປາຍ ຫລື ມີປະສົບການໃນເຮັດວຽກສອງ (2)ປີ ໃນໄລຍະ 5ປີຜ່ານມາ (ສໍາຫລັບຜູ້ສະໝັກຫລັກ, ສາມາດເບິ່ງເອກະສານເພີ່ມເຕີມທາງອອນລາຍ)
- ☐ ຄ່າທໍານຽມສໍາພາດວີຊາລ໋ອດຕາລີເປັນເງິນ$330

## ການກວດຄືນເອກະສານກ່ອນເຂົ້າຂໍວີຊາລ໋ອດຕາລີ

ກ່ອນການເຂົ້າສໍາພາດ ພວກເຮົາຂໍແນະນໍາໃຫ້ທ່ານກວດກາຂໍ້ມູນຢູ່ໃນ initial E- DV entry. ໃນຟອມອີເລັກໂທຣນິກຂອງທ່ານ, ທ່ານຕ້ອງໄດ້ກວດເບິ່ງສະຖານະພາບຂອງທ່ານໃຫ້ຖືກຕ້ອງ. ຖ້າຫາກທ່ານແຕ່ງງານຖືກຕ້ອງຕາມກົດໝາຍ, ທ່ານຕ້ອງຂຽນຊື່ຄູ່ສົມລົດຂອງທ່ານ, ເຖິງແມ່ນວ່າພວກທ່ານຈະແຍກທາງກັນແລ້ວກໍ່ຕາມ(ຍົກເວັ້ນແຕ່ຄູ່ສົມລົດຂອງທ່ານຈະຖືສັນຊາດອາເມລິກາຫຼື ຢູ່ອາເມລິກາຢ່າງຖືກຕ້ອງຕາມກົດໝາຍ).

ນອກນັ້ນ, ທ່ານຈະຕ້ອງຂຽນຊື່ລູກຂອງທ່ານທັງໝົດທີ່ຍັງມີຊີວິດຢູ່ ຜູ້ທີ່ບໍ່ທັນແຕ່ງງານ ແລະ ມີອາຍຸຕໍ່າກ່ວາ 21 ປີ. ນີ້ແມ່ນລວມທັງລູກທີ່ເກີດຈາກທ່ານເອງ, ລູກຂອງຄູ່ແຕ່ງງານຂອງທ່ານ ຫຼື ລູກລ້ຽງທີ່ຖືກຕ້ອງຕາມກົດໝາຍ.

ການບໍ່ໄດ້ລະບຸຊື່ຂອງຄູ່ສົມລົດ ຫຼື ລູກທີທ່ານມີໃນເວລາປະກອບເອກະສານຂໍວີຊາລ໋ອດຕາລີ ແມ່ນຈະສົ່ງຜົນໃຫ້ຖືກປະຕິເສດວີຊາຂອງທ່ານ ແລະ ວີຊາຂອງຄອບຄົວທ່ານ.
ຄ່າສໍາພາດຕ່າງໆທີ່ໄດ້ຈ່າຍໃຫ້ລັດຖະບານອາເມລິກາແລ້ວບໍ່ສາມາດຖອນຄືນໄດ້. ຖ້າທ່ານບໍ່ໄດ້ຂຽນຊື່ຂອງເດັກເກີດໃໝ່ ຫຼື ຄູ່ສົມລົດທີ່ຍັງແຕ່ງງານກັບທ່ານຕອນທ່ານຂຽນຟອມ, ທ່ານບໍ່ຄວນດໍາເນີນເອກະສານຕໍ່ໄປ. ທ່ານສາມາດກວດຄືນເງື່ອນໄຂທາງອອນລາຍ.

ກັບຄືນໄປເບິ່ງດ້ານເທິງ